**ເອກະສານໂຄສະນາ - ປາຖະກະຖາ**

**ວັນເກີດ ປະທານ ສຸພານຸວົງ ຄົບຮອບ 114 ປີ**

**( 13 ກໍລະກົດ 1909 - 13 ກໍລະກົດ 2023 )**

ປະທານ ສຸພານຸວົງ ແມ່ນຜູ້ນຳສູງສຸດ ຂອງພັກ ແລະ ລັດ ຄົນໜຶ່ງທີ່ຕິດພັນກັບຂະບວນການປະຕິວັດ, ເພິ່ນໄດ້ຮ່ວມກັບຜູ້ນຳຄົນອື່ນໆ ນຳພາຂະບວນການຕໍ່ສູ້ປົດປ່ອຍຊາດ ກໍຄື ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ປະທານ ສຸພານຸວົງ ເປັນເຈົ້າຊາຍແດງ, ເປັນສັນຍາລັກ ຂອງຄວາມສາມັກຄີ, ເປັນວິສາວະກອນເອກ ຂອງປະເທດເຮົາ ແລະ ເປັນນັກການເມືອງທີ່ມີຈິດໃຈສາກົນອັນຜ່ອງໃສ, ເພິ່ນເປັນຜູ້ນຳທີ່ມີຈິດໃຈຮັກຊາດອັນສູງສົ່ງ, ຍອມເສຍສະຫຼະທຸກສິ່ງທຸກຢ່າງ ເພື່ອປະເທດຊາດ, ເພື່ອປະຊາຊົນ. ດັ່ງນັ້ນ ເນື່ອງໃນໂອກາດວັນເກີດຂອງ ປະທານ ສຸພານຸວົງ ຄົບຮອບ 114 ປີ ( 13 ກໍລະກົດ 1909 - 13 ກໍລະກົດ 2023 ) ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງໄດ້ສ້າງເອກະສານໂຄສະນາ - ປາຖະກະຖາ ເພື່ອໃຫ້ພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ໄດ້ຮໍ່າຮຽນເອົາແບບຢ່າງອັນດີງາມ ຂອງເພິ່ນ ໄປໝູນໃຊ້ເຂົ້າໃນການປັບປຸງແບບແຜນວິທີການເຮັດວຽກ, ແບບແຜນການນຳພາ ແລະ ແບບແຜນດຳລົງຊີວິດ ຂອງຕົນ ເຊິ່ງມີເນື້ອໃນ ດັ່ງນີ້:

**I. ຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງ ປະທານ ສຸພານຸວົງ.**

ປະທານ ສຸພານຸວົງ ເກີດວັນທີ 13 ກໍລະກົດ 1909 ທີ່ຫຼວງພະບາງໃນຄອບຄົວເຊື້ອເຈົ້າ, ເປັນໂອຣົດຂອງເຈົ້າມະຫາອຸປະຮາດບຸນຄົງ ແລະ ໝ່ອມຄຳອ້ວນ ມີເອື້ອຍ 2 ຄົນ ຄື: ເຈົ້າຍິງທະວີວັນ ແລະ ເຈົ້າຍິງຈິນດາຣັດສະໝີ, ມີອ້າຍຕ່າງມານດາ 2 ຄົນ ຄື: ເຈົ້າເພັດຊະຣາດ ແລະ ເຈົ້າສຸວັນນະພູມມາ.

ອາຍຸໄດ້ 7 ປີ ເພິ່ນໄດ້ເຂົ້າຊັ້ນປະຖົມສຶກສາທີ່ຫຼວງພະບາງ, ເພິ່ນເປັນຄົນດຸໝັ່ນ, ຮຽນເກັ່ງ ແລະ ມີພອນສະຫວັນຫຼາຍດ້ານ, ຜົນການຮຽນ ຂອງເພິ່ນໄດ້ຄະແນນດີເລີດຕະຫຼອດຈົນຈົບຊັ້ນປະຖົມ; ຫຼັງຈາກນັ້ນ ປີ 1920 ເພິ່ນໄດ້ເດີນທາງໄປຮຽນຕໍ່ມັດທະຍົມ ທີ່ຮ່າໂນ້ຍ ປະເທດຫວຽດນາມ ແລະ ຖືກຄັດເລືອກເປັນນັກຮຽນດີເດັ່ນ ຂອງໂຮງຮຽນໂປຼເຕັກໂຕຣາ (Protect to rat) ຂອງແຄ້ວນອິນດູຈີນ; ພາຍຫຼັງຮຽນຈົບຊັ້ນມັດທະຍົມ ປີ 1931 ເພິ່ນກໍໄດ້ໄປສຶກສາຕໍ່ ຢູ່ມະຫາວິທະຍາໄລຂົວທາງແຫ່ງຊາດ, ສາຂາວິຊາວິສະວະກອນພົນລະເຮືອນ ນະຄອນຫຼວງປາຣີ ປະເທດຝຣັ່ງ, ປະທານ ສຸພານຸວົງ ເປັນຄົນດຸໝັ່ນມັກໃນການຮຽນຮູ້, ບໍ່ວ່າຈະເປັນທາງດ້ານທິດສະດີ ກໍຄືການລົງຝຶກຫັດ - ປະຕິບັດຕົວຈິງ, ນອກຈາກນັ້ນ ເພິ່ນກໍມັກເດີນທາງໄປຫຼາຍໆປະເທດໃນທະວີບເອີລົບ ແລະ ບັນດາປະເທດໃນທະວີບອາຟຣິກກາ ເພື່ອສຳຜັດກັບຄວາມເປັນຈິງແລະ ຊອກຮູ້ປະສົບການໃນດ້ານຕ່າງໆ, ເພິ່ນດຳລົງຊີວິດແບບງ່າຍ, ບໍ່ຟູມເຟືອຍ, ເພິ່ນມີພອນສະຫວັນໃນດ້ານພາສາ, ສາມາດເວົ້າໄດ້ດີເຖິງ 10 ພາສາ.

ປີ 1937 ປະທານ ສຸພານຸວົງ ເປັນຄົນລາວຜູ້ທຳອິດ ທີ່ຮຽນຈົບວິສາວະກອນຂົວທາງ ຢູ່ປະເທດຝຣັ່ງ. ພາຍຫຼັງຮຽນຈົບ ເພິ່ນໄດ້ກັບຄືນອິນດູຈີນ ເປັນພະນັກງານໃນຂະແໜງໂຍທາທິການປະຈຳ ຢູ່ຍາຈ່າງ ( ປະ

ເທດຫວຽດນາມ ). ພາຍໃນໄລຍະ 3 ປີ ເພິ່ນໄດ້ຄວບຄຸມການກໍ່ສ້າງທາງເລກທີ 14 ແລະ ໂຄງການເຂື່ອນໄຟຟ້ານໍ້າຕົກ ຢູ່ເມືອງວິນສຳເລັດ, ນອກຈາກນັ້ນ ກໍໄດ້ໄປຊ່ວຍສ້າງຂົວ ແລະ ສ້ອມແປງທາງເລກທີ 13 ຢູ່ແຂວງຊຽງແຕງ ປະເທດກຳປູເຈຍ, ຕໍ່ມາກໍຖືກແຕ່ງຕັ້ງໄປປະຈຳ ຢູ່ເມືອງພິນ ແຂວງສະຫວັນນະເຂດ ເພື່ອກໍ່ສ້າງທາງເລກທີ 23 ແລະ ຂົວເຊບັ້ງຫຽງ.

ໃນເວລາຮັບລາຊະການ ຢູ່ຫວຽດນາມ, ກຳປູເຈຍ ແລະ ລາວ, ເພິ່ນໄດ້ສ້າງຜົນງານຫຼາຍຢ່າງ ແລະ ຖືກຍອມຮັບວ່າ ເປັນວິສະວະກອນຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ເຮັດແທ້ທຳຈິງ; ໃນການເຄື່ອນໄຫວວຽກງານ ຢູ່ແຕ່ລະບ່ອນນັ້ນ ເພິ່ນໄດ້ສຳຜັດ, ໄດ້ຮູ້, ໄດ້ເຫັນພຶດຕິກຳການກົດຂີ່ຂູດຮີດ ຂອງພວກຈັກກະພັດລ່າເມືອງຂຶ້ນຝຣັ່ງທີ່ມີ ຕໍ່ປະຊາຊົນ 3 ຊາດອິນດູຈີນ, ຊຶ່ງມັນໄດ້ສົ່ງຜົນກະທົບໂດຍກົງ ຕໍ່ສະພາບແນວຄິດຈິດໃຈ ຂອງເພິ່ນ, ພາຍຫຼັງການຄົ້ນຄິດຕຶກຕອງຢ່າງຖີ່ຖ້ວນ ວ່າ: ຈະຮັບໃຊ້ຈັກກະພັດຝຣັ່ງກົດຂີ່ຂົ່ມເຫັງປະຊາຊົນບັນດາເຜົ່າ ຫຼື ຈະລຸກຂຶ້ນຕໍ່ສູ້ນຳພາປະເທດຊາດຫຼຸດພົ້ນອອກຈາກການເປັນຂ້ອຍຂ້າ ຂອງຕ່າງຊາດ, ໃນທີ່ສຸດ ເພິ່ນກໍໄດ້ເລືອກເອົາເສັ້ນທາງເດີນໃໝ່ແຫ່ງຊີວິດ ຄື: ກ້າວສູ່ເສັ້ນທາງແຫ່ງການຕໍ່ສູ້ ເພື່ອກອບກູ້ເອົາຄວາມເປັນເອກະລາດມາໃຫ້ປະເທດ, ນຳເອົາອິດສະລະພາບ ແລະ ສິດເປັນເຈົ້າມາໃຫ້ປະຊາຊົນລາວບັນດາເຜົ່າ.

ໃນເວລາຕໍ່ມາ ປະທານ ສຸພານຸວົງ ກໍໄດ້ພົບປະກັບ ປະທານ ໂຮ່ຈີ່ມິນ, ເພິ່ນໄດ້ຮັບການຊີ້ນຳ ແລະ ການຊ່ວຍເຫຼືອຈາກ ປະທານ ໂຮ່ຈີ່ມິນ ໃຫ້ຈັດຕັ້ງກອງທະຫານປະສົມ ລາວ - ຫວຽດນາມ ຂຶ້ນຢູ່ປະເທດລາວ ເພື່ອດຳເນີນການຕໍ່ສູ້ຕ້ານພວກຈັກກະພັດລ່າເມືອງຂຶ້ນຝຣັ່ງ ຍາດເອົາຄວາມເປັນເອກະລາດມາໃຫ້ປະເທດລາວ. ການພົບປະໃນຄັ້ງນັ້ນ ໄດ້ສ້າງຄວາມປະທັບໃຈອັນເລິກເຊິ່ງທີ່ສຸດ ໃນຊີວິດການເຄື່ອນໄຫວປະຕິວັດຂອງ ປະທານ ສຸພານຸວົງ.

ເດືອນຕຸລາ ປີ 1945 ປະທານ ສຸພານຸວົງ ໄດ້ກັບຄືນປະເທດລາວຕາມເສັ້ນທາງເລກ 9, ເພິ່ນໄດ້ຮັບການຕ້ອນຮັບຢ່າງອົບອຸ່ນ ຈາກຊາວເຊໂປນທຸກຊັ້ນຄົນ ແລະ ໄດ້ກ່າວຄຳປາໄສ ຕໍ່ໜ້າປະຊາຊົນທີ່ມາໂຮມຊຸມນຸມຢ່າງຫຼວງຫຼາຍ, ເພິ່ນໄດ້ເວົ້າວ່າ: **"ແຜ່ນດິນລາວຕ້ອງແມ່ນຄົນລາວເປັນເຈົ້າຂອງ, ສະນັ້ນ ພວກເຮົາທຸກຄົນຕ້ອງສາມັກຄີກັນໂຮມແຮງກັນຕໍ່ສູ້ກູ້ຊາດອັນແສນຮັກ ຂອງພວກເຮົາຄືນມາໃຫ້ໄດ້"** ນັ້ນແມ່ນຈຸດເລີ່ມຕົ້ນແຫ່ງພາລະກິດປະຕິວັດອັນຍິ່ງໃຫຍ່ຂອງ ປະທານ ສຸພານຸວົງ.

ພາຍຫຼັງປະຊາຊົນລາວພາຍໃຕ້ການນຳພາ ຂອງພັກ ໄດ້ລຸກຮືຂຶ້ນຍຶດອຳນາດການປົກຄອງເກົ່າສຳເລັດໃນວັນທີ 12 ຕຸລາ 1945, ສ້າງຕັ້ງອຳນາດການປົກຄອງປະຕິວັດຂຶ້ນ ປະທານ ສຸພານຸວົງ ກໍໄດ້ຮັບການແຕ່ງຕັ້ງໃຫ້ເປັນລັດຖະມົນຕີກະຊວງການຕ່າງປະເທດ ແລະ ໃນວັນທີ 30 ຕຸລາ 1945 ເພິ່ນກໍຖືກແຕ່ງຕັ້ງເປັນຜູ້ບັນຊາການສູງສຸດ ຂອງກຳລັງປະກອບອາວຸດອິດສະຫຼະ ແລະ ໄດ້ເດີນທາງໄປທ່າແຂກ ເພື່ອບັນຊາກອງທະຫານປະສົມ ລາວ - ຫວຽດນາມ ເຊິ່ງມີກຳລັງປະມານ 600 ຄົນ.

ຕົ້ນປີ 1946 ຈັກກະພັດລ່າເມືອງຂຶ້ນຝຣັ່ງ ໄດ້ກັບມາຄືນມາຮຸກຮານລາວອີກຄັ້ງໃໝ່, ພວກເຂົາໄດ້ເຄື່ອນທັບຂະໜາດໃຫຍ່ເຂົ້າຍຶດຄອງບັນດາຕົວເມືອງຄືນໃໝ່, ໃນນັ້ນ ກໍ່ມີເມືອງທ່າແຂກ, ກອງທະຫານ

ປະສົມລາວ - ຫວຽດນາມ ພາຍໃຕ້ການບັນຊາຂອງ ປະທານ ສຸພານຸວົງ ໄດ້ດຳເນີນການສູ້ຮົບຢ່າງພິລະອາດຫານ ຕ້ານການບຸກໂຈມຕີຢ່າງປ່ວງບ້າ ຂອງພວກສັດຕູທີ່ມາຈາກທິດຕ່າງໆ, ພວກເຂົາໄດ້ນຳໃຊ້ທັງເຮືອບິນສູ້ຮົບ ແລະ ປືນໃຫຍ່ລະດົມຍິ່ງເຂົ້າໃສ່ທະຫານ ແລະ ຊາວເມືອງທ່າແຂກ, ໃນບັ້ນຮົບປ້ອງກັນຕົວເມືອງທ່າແຂກ ທະຫານຝຣັ່ງໄດ້ຂັ້ນຂ້າປະຊາຊົນລາວຢ່າງໂຫດຮ້າຍປ່າເຖື່ອນທີ່ສຸດ, ປະທານ ສຸພານຸວົງ ກໍໄດ້ຮັບບາດເຈັບສາຫັດ ແລະ ໄດ້ຂ້າມນ້ຳຂອງໄປລີ້ໄພ ຢູ່ປະເທດໄທ.

ວັນທີ 25 ຕຸລາ 1949 ພະຍາຄຳມ້າວ ນາຍົກລັດຖະມົນຕີ ຂອງລັດຖະບານຊົ່ວຄາວອິດສະຫຼະພັດຖິ່ນທີ່ບາງກອກ ໄດ້ປະກາດຍຸບລັດຖະບານຊົ່ວຄາວອິດສະຫຼະ, ຫຼັງຈາກນັ້ນ ພະຍາຄຳມ້າວ ແລະ ຄະນະຈຳນວນໜຶ່ງກໍ່ໄດ້ກັບຄືນມາຍອມຈຳນົນ ຕໍ່ຈັກກະພັດຝຣັ່ງ, ສ່ວນປະທານ ສຸພານຸວົງ ພ້ອມກັບເຈົ້າເພັດຊະຣາດ ໄດ້ປະກາດຈະຕໍ່ສູ້ຕ້ານຈັກກະພັດຝຣັ່ງຕໍ່ໄປ, ເພິ່ນໄດ້ກ່າວ ຕໍ່ສື່ມວນຊົນທີ່ບາງກອກວ່າ: **"ຂະບວນການຕໍ່ຕ້ານຈັກກະພັດລ່າເມືອງຂຶ້ນຝຣັ່ງ ເພື່ອປົດປ່ອຍຊາດ ຂອງປະຊາຊົນລາວ ຍັງຄົງດຳເນີນຕໍ່ໄປຈົນເຖິງວັນໄຊຊະນະສຸດທ້າຍ"** ໂອກາດດັ່ງກ່າວນີ້ ເພິ່ນໄດ້ຮຽກຮ້ອງເຖິງພີ່ນ້ອງຮ່ວມຊາດຈົ່ງສາມັກຄີກັນໃຫ້ແໜ້ນແຟ້ນ, ສືບຕໍ່ດຳເນີນການຕໍ່ສູ້ເດັດດ່ຽວຂັບໄລ່ພວກຣຸກຮານ ແລະ ລູກມື, ຍາດເອົາເອກະລາດແຫ່ງຊາດ ແລະ ອິດສະຫຼະພາບມາໃຫ້ປະເທດຊາດ.

ວັນທີ 13 ສິງຫາ 1950 ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດໄດ້ເປີດຂຶ້ນ, ໄດ້ຕົກລົງສ້າງຕັ້ງແນວໂຮມເອກະພາບແຫ່ງຊາດຂຶ້ນຢ່າງເປັນທາງການ ໂດຍໃສ່ຊື່ວ່າ "ແນວລາວອິດສະຫຼະ" ແລະ ໄດ້ສ້າງຕັ້ງລັດຖະບານລາວຕໍ່ຕ້ານ ປະກອບດ້ວຍ 5 ທ່ານ ໂດຍແມ່ນ ປະທານ ສຸພານຸວົງ ເປັນປະທານແນວລາວອິດສະຫຼະ, ທັງເປັນລັດຖະມະຫາເສນາ ( ນາຍົກລັດຖະມົນຕີ ) ຂອງລັດຖະບານລາວຕໍ່ຕ້ານ. ກອງປະຊຸມໄດ້ວາງໂຄງການການເມືອງ 12 ຂໍ້ ເຊິ່ງເປັນແນວທາງນະໂຍບາຍ ເພື່ອເຕົ້າໂຮມປະຊາຊົນທຸກເຜົ່າ, ທຸກຊັ້ນຄົນໃນລາວລຸກຂຶ້ນຕໍ່ສູ້ປົດປ່ອຍຊາດ.

ວັນທີ 13 ມີນາ 1951 ເພິ່ນໄດ້ເຂົ້າຮ່ວມກອງປະຊຸມພັນທະພາບປະຊາຊົນລາວ - ຫວຽດນາມ - ຂະແມ ເພື່ອສ້າງຕັ້ງແນວໂຮມສາມັກຄີປະຊາຊົນ 3 ປະເທດ ລາວ, ຫວຽດນາມ ແລະ ກຳປູເຈຍ.

ເດືອນພຶດສະພາ 1953 ທີ່ບ້ານຕອງ, ຕາແສງເມືອງປົວ, ເມືອງຊຳເໜືອ, ແຂວງຫົວພັນ, ປະທານ ສຸພານຸວົງ ໄດ້ເຂົ້າເປັນສະມາຊິກພັກກອມມູນິດອິນດູຈີນ. ໃນວັນທີ 14 ພຶດສະພາ 1955 ປະທານ ສຸພານຸວົງ ກໍຖືກແຕ່ງຕັ້ງເຂົ້າເປັນກຳມະການສູນກາງພັກປະຊາຊົນລາວ ( ພັກປະຊາຊົນປະຕິວັດລາວ ໃນປັດຈຸບັນ ).

ວັນທີ 6 ມັງກອນ 1956 ປະທານ ສຸພານຸວົງ ໄດ້ຮັບເລືອກຕັ້ງເປັນປະທານຄະນະກຳມະການສູນກາງແນວລາວຮັກຊາດອີກເທື່ອໜຶ່ງ, ເພິ່ນໄດ້ອອກຖະແຫຼງການ ກ່ຽວກັບນະໂຍບາຍສັນຕິພາບ ເປັນກາງ ຂອງລາວ, ຮຽກຮ້ອງໃຫ້ພີ່ນ້ອງຮ່ວມຊາດໃນທົ່ວປະເທດລຸກຂຶ້ນຕໍ່ສູ້ຕ້ານຈັກກະພັດອາເມລິກາ, ທວງໃຫ້ລັດຖະບານລາຊະອານາຈັກ ຕ້ອງຮ່ວມມືກັບຝ່າຍປະເທດລາວຢ່າງຈິງຈັງ ໃນການປະຕິບັດສັນຍາເຊີແນວ, ຮຽກຮ້ອງໃຫ້ກຳລັງປະຕິວັດເດັດດ່ຽວສູ້ຮົບປົກປັກຮັກສາ ສອງແຂວງເຕົ້າໂຮມ ແລະ ຂະຫຍາຍຂະບວນການຕໍ່ສູ້ ຂອງປະຊາຊົນໃນ 10 ແຂວງ.

ວັນທີ 1 ສິງຫາ 1956 ຢູ່ທີ່ວຽງຈັນ ການເຈລະຈາ ລະຫວ່າງ ຄະນະຜູ້ແທນກຳລັງຝ່າຍປະເທດລາວ ໂດຍແມ່ນ ປະທານ ສຸພານຸວົງ ເປັນຫົວໜ້າ ກັບຄະນະຜູ້ແທນ ຂອງລັດຖະບານລາຊະອານາຈັກ ໂດຍແມ່ນ ເຈົ້າສຸວັນນະພູມມາ ນາຍົກລັດຖະມົນຕີເປັນຫົວໜ້າ ໄດ້ຮັບຜົນດີ, ວັນທີ 5 ສິງຫາ 1956 ທັງສອງຝ່າຍໄດ້ ອອກຖະແຫຼງການຮ່ວມ ຈະພາປະເທດລາວເດີນໄປຕາມເສັ້ນທາງສັນຕິພາບ ເປັນກາງ, ຍຶດໝັ້ນ 5 ຫຼັກການ ຢູ່ຮ່ວມກັນໂດຍສັນຕິ, ສ້າງສາຍພົວພັນທີ່ດີກັບທຸກປະເທດ ເປັນຕົ້ນແມ່ນ ບັນດາປະເທດໃກ້ຄຽງ, ບໍ່ເຂົ້າ ຮ່ວມກຸ່ມສຳພັນທະຫານໃດໆ, ຢຸດຕິການປະທະກັນດ້ວຍອາວຸດຢູ່ 2 ແຂວງເຕົ້າໂຮມ ຂອງຝ່າຍປະເທດລາວ, ປະຊາຊົນມີສິດເສລີພາບ ປະຊາທິປະໄຕ, ພົນລະເມືອງລາວທຸກຄົນມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກ ຕັ້ງ.

ປີ 1957 ມີການເຈລະຈາ ລະຫວ່າງ ຝ່າຍປະເທດລາວ ກັບຝ່າຍລາຊະອານາຈັກ ກ່ຽວກັບບັນຫາປອງ ດອງຊາດ, ຈັດຕັ້ງລັດຖະບານປະສົມແຫ່ງຊາດຂຶ້ນ ໃນວັນທີ 19 ພະຈິກ 1957 ໂດຍມີແນວລາວຮັກຊາດເຂົ້າ ຮ່ວມ, ໃນນັ້ນ ປະທານ ສຸພານຸວົງ ຖືກແຕ່ງຕັ້ງເປັນລັດຖະມົນຕີກະຊວງແຜນຜັງ, ກໍ່ສ້າງ ແລະ ຜັງເມືອງ.

ປີ 1958 ມີການເລືອກຕັ້ງສະມາຊິກສະພາຜູ້ແທນລາຊະດອນເພີ່ມເຕີມເຂົ້າໃນສະພາ, ປະທານ ສຸ ພານຸວົງ ໄດ້ລົງສະໝັກເລືອກຕັ້ງ ແລະ ເພິ່ນກໍໄດ້ຮັບຄະແນນສຽງຫຼາຍທີ່ສຸດ.

ຕົ້ນປີ 1959 ລັດຖະບານ ຜຸຍ ຊະນະນິກອນ ໄດ້ປະກາດໃຊ້ກົດໝາຍຕ້ານກອມມູນິດ, ວັນທີ 28 ກໍລະກົດ 1959 ພວກເຂົາໄດ້ບັງອາດຈັບກຸມຄຸມຂັງ ປະທານ ສຸພານຸວົງ ແລະ ບັນດາຜູ້ນຳທ່ານອື່ນໆໄປກັກ ຂັງໄວ້ ຢູ່ຄຸກໂພນເຄັງ, ໃນເວລາຖືກກັກຂັງຢູ່ໃນຄຸກ ປະທານ ສຸພານຸວົງ ແລະ ບັນດາຜູ້ນຳປະຕິວັດກໍ່ໄດ້ມີ ການຕໍ່ສູ້ບໍ່ຍອມກົ້ມຫົວໃຫ້ສັດຕູ, ບໍ່ຮັບເອົາການຊື້ຈ້າງຈອບອອຍ, ບໍ່ຫວັ່ນໄຫວ ຕໍ່ການຂົ່ມຂູ່ ຂອງພວກເຂົາ, ກົງກັນຂ້າມ ເພິ່ນຍັງໄດ້ກ່າວປະນາມການທໍລະຍົດ ຂອງພວກເຂົາ, ພ້ອມກັນນັ້ນ ເພິ່ນກໍ່ໄດ້ເປັນເຈົ້າການ ຂົນຂວາຍບັນດາສາລະວັດທະຫານທີ່ມາເວນຍາມຄຸກ, ໂດຍສາມາດລະດົມທະຫານສັດຕູໃຫ້ກາຍມາເປັນມິດ ແລ້ວເປີດປະຕູຄຸກພາເພິ່ນ ແລະ ຜູ້ນຳແນວລາວຮັກຊາດທັງໝົດໂຕນອອກຈາກຄຸກ ແລະ ກັບຄືນສູ່ຖານທີ່ ໝັ້ນ ຂອງການປະຕິວັດໄດ້ຢ່າງປອດໄພ ໃນຄືນ ຂອງວັນທີ 23 ພຶດສະພາ 1960.

ວັນທີ 23 ສິງຫາ 1960 ປະທານ ສຸພານຸວົງ ໄດ້ຕາງໜ້າແນວລາວຮັກຊາດປະກາດຖະແຫຼງການສະ ໜັບສະໜູນແນວທາງສັນຕິພາບ, ເປັນກາງ ແລະ ຄວາມປອງດອງຊາດ ຂອງລັດຖະບານ ເຈົ້າສຸວັນນະພູມມາ; ສະຖານະການ ຂອງປະເທດລາວ ໄດ້ຜັນແປໄປຢ່າງໄວວາ ເຊິ່ງເປັນຜົນດີໃຫ້ຝ່າຍປະຕິວັດ, ສິ່ງຜົນໃຫ້ຝ່າຍ ກົງກັນຂ້າມຈຳຕ້ອງເຊັນສັນຍາເຊີແນວ ກ່ຽວກັບລາວ ແລະ ຈັດຕັ້ງລັດຖະບານປະສົມ 3 ຝ່າຍຂຶ້ນ ໃນວັນທີ 23 ມິຖຸນາ 1962, ໃນນັ້ນ ປະທານ ສຸພານຸວົງ ຖືກແຕ່ງຕັ້ງເປັນຮອງນາຍົກລັດຖະມົນຕີ, ທັງເປັນ ລັດຖະມົນຕີກະຊວງເສດຖະກິດ ແລະ ແຜນຜັງ.

ປີ 1964 - 1969 ສົງຄາມພິເສດທີ່ຈັກກະພັດອາເມລິກາດຳເນີນ ຢູ່ປະເທດລາວໄດ້ຂຶ້ນສູ່ລະດັບສູງ, ການຕໍ່ສູ້ ຂອງແນວລາວຮັກຊາດ ສາມາດຍາດໄດ້ໄຊຊະນະຢ່າງເນື່ອງນິດລຽນຕິດ, ຝ່າຍກົງກັນຂ້າມຈຳຕ້ອງ

ຍອມເຈລະຈາ ໃນວັນທີ 3 ກຸມພາ 1970 ຢູ່ທົ່ງໄຫຫີນ, ປະທານ ສຸພານຸວົງ ກໍໄດ້ຕາງໜ້າແນວລາວຮັກຊາດເຂົ້າຮ່ວມ.

ວັນທີ 24 - 25 ເມສາ 1970 ປະທານ ສຸພານຸວົງ ໄດ້ຕາງໜ້າຄະນະຜູ້ແທນແນວລາວຮັກຊາດເຂົ້າຮ່ວມກອງປະຊຸມສຸດຍອດ ຂອງປະຊາຊົນ 3 ຊາດອິນດູຈີນ, ນອກຈາກນັ້ນ ເພິ່ນຍັງໄດ້ເດີນທາງໄປຢ້ຽມຢາມບັນດາປະເທດສັງຄົມນິຍົມ ແລະ ບັນດາປະເທດທີ່ຮັກຫອມສັນຕິພາບ ຢູ່ທະວີບອາຊີ, ອາຟຣິກກາ, ອາເມລິກາລາຕິນ ແລະ ໄດ້ເຂົ້າຮ່ວມກອງປະຊຸມສາກົນ, ກອງປະຊຸມພາກພື້ນຫຼາຍກວ່າ 10 ຄັ້ງ.

ໃນກອງປະຊຸມໃຫຍ່ ຄັ້ງທີ II ຂອງພັກ ເດືອນກຸມພາ ປີ 1972 ປະທານ ສຸພານຸວົງ ໄດ້ຮັບເລືອກຕັ້ງເຂົ້າໃນ ຄະນະບໍລິຫານງານສູນກາງພັກ ແລະ ກົມການເມືອງສູນກາງພັກ.

ວັນທີ 5 ເມສາ 1974 ລັດຖະບານປະສົມແຫ່ງຊາດຊົ່ວຄາວ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດໄດ້ຮັບການສ້າງຕັ້ງຂຶ້ນ ປະທານ ສຸພານຸວົງ ຖືກແຕ່ງຕັ້ງເປັນປະທານຄະນະມົນຕີປະສົມການເມືອງແຫ່ງຊາດ.

ວັນທີ 1 - 2 ທັນວາ 1975 ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ໄດ້ເປັນເອກະສັນກັນແຕ່ງຕັ້ງ ປະທານ ສຸພານຸວົງ ເປັນປະທານປະເທດຄົນທໍາອິດຂອງ ສປປ ລາວ, ທັງເປັນປະທານສະພາປະຊາຊົນສູງສຸດ.

ພາຍຫຼັງສະຖາປະນາ ສປປ ລາວ, ປະທານ ສຸພານຸວົງ ໄດ້ສືບຕໍ່ເປັນຄັນທຸງ ຂອງແນວໂຮມມະຫາສາມັກຄີແຫ່ງຊາດ ( ແນວລາວຮັກຊາດ ). ໃນວັນທີ 20 ກຸມພາ 1979 ກອງປະຊຸມໃຫຍ່ແນວລາວຮັກຊາດໄດ້ປ່ຽນຊື່ເປັນແນວລາວສ້າງຊາດ, ປະທານ ສຸພານຸວົງ ໄດ້ຮັບເລືອກຕັ້ງເປັນປະທານຄະນະກໍາມະການສູນກາງແນວລາວສ້າງຊາດ.

ໃນກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກ ປີ1982 ແລະ ກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກ ປີ 1986 ປະທານ ສຸພານຸວົງ ໄດ້ຮັບເລືອກຕັ້ງເຂົ້າໃນ ຄະນະບໍລິຫານງານສູນກາງພັກ ແລະ ກົມການເມືອງສູນກາງພັກ.

ນັບແຕ່ປີ 1975 - 1995 ປະທານ ສຸພານຸວົງ ໄດ້ນໍາພາປະຊາຊົນບັນດາເຜົ່າ ຜ່ານຜ່າອຸປະສັກຕ່າງໆໃນໄລຍະຂ້າມຜ່ານ, ນໍາພາປະຊາຊົນດໍາເນີນພາລະກິດປ່ຽນແປງໃຫມ່ ແລະ ນໍາພາປະຊາຊົນສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງເທື່ອລະກ້າວ.

ທຸກໄລຍະ ຂອງການປະຕິວັດ ປະທານ ສຸພານຸວົງ ໄດ້ສຸມສະຕິປັນຍາ ແລະ ເຫື່ອແຮງ ຂອງຕົນ ເພື່ອຊີ້ນໍາ - ນໍາພາຂະບວນການປະຕິວັດ ຍາດເອົາໄຊຊະນະອັນຍິ່ງໃຫຍ່ ມາໃຫ້ແກ່ປະເທດຊາດ. ປະທານ ໄກສອນ ພົມວິຫານ ໄດ້ເວົ້າເຖິງ ປະທານ ສຸພານຸວົງ ວ່າ: **"ຊື່ສຽງຮຽງນາມ ຂອງສະຫາຍ ໄດ້ພົ້ນເດັ່ນຂຶ້ນໃນຖານະທີ່ເປັນນັກຮົບຮັກຊາດຮຸ່ນທໍາອິດ ທີ່ໄດ້ເອົາຊີວິດ ຂອງຕົນ ຜູກພັນກັບການປະຕິວັດຕະຫຼອດມາ ໂດຍບໍ່ງໍ້ງ່ຽງ ຕໍ່ຄວາມລໍາບາກ, ຄວາມເສຍສະຫຼະໃດໆ ກະທັ້ງເຖິງບໍ່ຫວາດຫວັ່ນ ຕໍ່ກັບການຈັບກຸມຄຸມຂັງ ຂອງສັດຕູ, ຍາມໃດກໍ່ຕໍ່ສູ້ ເພື່ອອຸດົມຄະຕິປະຕິວັດອັນສູງສົ່ງ, ເພື່ອຄວາມເປັນເອກະລາດ ແລະ ຄວາມວັດທະນາຖາວອນ ຂອງປະເທດຊາດ, ເພື່ອອິດສະຫຼະພາບ ແລະ ຄວາມຢູ່ດີກິນດີ ຂອງປະຊາຊົນ"** ໃນຫຼາຍສິບປີທີ່ຜ່ານມາ

ປະທານ ສຸພານຸວົງ **“ໄດ້ເຂົ້າຮ່ວມກັບໝູ່ຄະນະນໍາພາ ຂອງພັກ ເລີ່ມຕັ້ງແຕ່ຊຸມປີຕົ້ນ ຂອງການປະຕິວັດ, ເຂົ້າຮ່ວມກໍ່ສ້າງຮາກຖານປະຕິວັດ ແລະ ຖານທີ່ໝັ້ນ ຕໍ່ຕ້ານທີ່ກ້າແກ່ນຕະຫຼອດມາໃນສອງສະໄໝຕໍ່ຕ້ານອັນຍາວນານ ຂອງປະຊາຊົນເຮົາ”.**

**II. ຜົນງານ ແລະ ຄຸນງາມຄວາມດີຂອງ ປະທານ ສຸພານຸວົງ.**

① ຄຸນລັກສະນະທີ່ພົ້ນເດັ່ນຂອງ ປະທານ ສຸພານຸວົງ ແມ່ນເປັນຜູ້ນໍາທີ່ມີຄວາມຈົ່ງຮັກພັກດີ ຕໍ່ອຸດົມການປະຕິວັດຢ່າງເດັດຂາດ, ຕໍ່ສູ້ຢ່າງກ້າແກ່ນພິລະອາດຫານ ຍາມໃດກໍ່ໄດ້ຍົກສູງສະຕິ ມີລະບຽບວິໄນຕໍ່ການຈັດຕັ້ງ, ນັບຖືໝູ່ຄະນະ, ເອື້ອເຟື້ອຮັກແພງມິດສະຫາຍຢ່າງຈິງໃຈ, ດໍາລົງຊີວິດຢ່າງສັດຊື່ສຸດຈະລິດ ແລະ ງ່າຍດາຍ.

② ແມ່ນປັນຍາຊົນຜູ້ຍິ່ງໃຫຍ່ ເປັນເຊື້ອເຈົ້າຜູ້ໜຶ່ງ ທີ່ມີນໍ້າໃຈຮັກຊາດອັນດູດດື່ມ, ມີຈິດໃຈຕໍ່ສູ້ທີ່ອາດຫານກ້າແກ່ນ, ມີທັດສະນະຫຼັກໝັ້ນອັນໜັກແໜ້ນ ແລະ ນໍ້າໃຈເສຍສະຫຼະອັນສູງສົ່ງ ເພື່ອຊາດ ເພື່ອປະຊາຊົນ; ປະທານ ສຸພານຸວົງ ໄດ້ເລີ່ມຈາກນັກຮັກຊາດທີ່ແທ້ຈິງກາຍເປັນນັກປະຕິວັດທີ່ກ້າແກ່ນ, ເປັນໜຶ່ງໃນບັນດາຜູ້ນໍາທີ່ດີເດັ່ນ ແລະ ເຄົາລົບຮັກ ຂອງປະຊາຊົນລາວເຜົ່າຕ່າງໆ.

③ ຕະຫຼອດຊີວິດຂອງ ປະທານ ສຸພານຸວົງ ບໍ່ວ່າຈະຢູ່ໃນຕໍາແໜ່ງໃດ, ຄວາມຮັບຜິດຊອບອັນໃດເພິ່ນກໍ່ໄດ້ອຸທິດໝົດຈິດໝົດໃຈ, ສຸດຄວາມສາມາດ ແລະ ຫົວຄິດປະດິດສ້າງ ຂອງຕົນ ໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ເພື່ອເອກະລາດ, ອະທິປະໄຕ ຂອງຊາດ ແລະ ຄວາມສົມບູນພູນສຸກຂອງປະຊາຊົນເຮົາ.

④ ປະທານ ສຸພານຸວົງ ໄດ້ເດີນຕາມເສັ້ນທາງ ຂອງພັກ, ຄວາມສາມາດ, ຄຸນນະທໍາ ແລະ ອິດທິພົນຂອງເພິ່ນ ໄດ້ກາຍເປັນສິ່ງກະຕຸກຊຸກຍູ້ປຸກລະດົມ ດຶງດູດປະຊາຊົນເຜົ່າຕ່າງໆ, ຊັ້ນຄົນຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ, ປະກອບສ່ວນສ້າງກ້ອນກໍາລັງສາມັກຄີເປັນອັນໜຶ່ງອັນດຽວກັນ ໃນແນວໂຮມເອກະພາບແຫ່ງຊາດ ເຊິ່ງອັນນັ້ນໄດ້ກາຍເປັນໜຶ່ງໃນບັນດາປັດໄຈອັນສໍາຄັນ ທີ່ຮັບປະກັນໄຊຊະນະ ຂອງການປະຕິວັດປະເທດເຮົາໃນແຕ່ລະໄລຍະ; ເພິ່ນເຄີຍຕັກເຕືອນພະນັກງານ, ສະມາຊິກພັກ ຢູ່ສະເໝີວ່າ ຕ້ອງຮູ້ຈັກສົມທົບນໍ້າໃຈຮັກຊາດອັນເລິກເຊິ່ງ ກັບນໍ້າໃຈສາກົນອັນແທ້ຈິງ, ຍາມໃດເພິ່ນກໍ່ເອົາໃຈໃສ່ທະນຸຖະໜອມການພົວພັນມິດຕະພາບຖານອ້າຍນ້ອງ, ມິດຈິດມິດໃຈສາກົນນິຍົມ ອັນບໍລິສຸດຜຸດຜ່ອງຕະຫຼອດມາ.

⑤ ເພິ່ນເປັນນັກການເມືອງທີ່ເກັ່ງກ້າ, ສະຫຼາດສະຫຼຽວ ມີໄຫວພິບໃນການວາງຍຸດໂທບາຍ ການຕໍ່ສູ້ດ້ານການເມືອງ ແລະ ການຕ່າງປະເທດ ຢູ່ໃນແຕ່ລະໄລຍະ, ເພິ່ນໃນຖານະທີ່ເປັນນັກການເມືອງລະດັບສາກົນທີ່ດີເດັ່ນໄດ້ມີການປະກອບສ່ວນອັນປະເສີດເຂົ້າໃນການປັບປຸງສັນຕິພາບໂລກ, ເຂົ້າໃນການເປີດກວ້າງການຮ່ວມມື ລະຫວ່າງ ບັນດາປະເທດ ແລະ ປະຊາຊາດ ຢູ່ໃນໂລກ.

⑥ ປະທານ ສຸພານຸວົງ ມີຄຸນສົມບັດສິນທໍາປະຕິວັດອັນຜ່ອງໃສ, ມີຄວາມມານະອົດທົນ, ເດັດດ່ຽວ, ເຂັ້ມແຂງ, ມີເຫດ ມີຜົນ, ຄວາມກ້າຫານ ແລະ ຄວາມເສຍສະຫຼະ, ຍາມໃດເພິ່ນກໍ່ຖືຜົນປະໂຫຍດ ຂອງຊາດ,

ຂອງປະຊາຊົນສູງກ່ວາຜົນປະໂຫຍດສ່ວນຕົວ ແລະ ຄອບຄົວ. ດັ່ງທີ່ເພິ່ນໄດ້ຂຽນໄວ້ໃນວັນທີ 10 ກັນຍາ 1948... **"ເວລານີ້ເຮົາມີແຕ່ປະເທດຊາດເທົ່ານັ້ນທີ່ໃຫຍ່ກວ່າໝູ່ໝົດ..."**

⑦ ປະທານ ສຸພານຸວົງ ດໍາລົງຊີວິດແບບງ່າຍດາຍ, ກະທັດຮັດ, ເພິ່ນເປັນຄົນດຸໝັ່ນຫ້າວຫັນ, ປະຢັດມັດທະຍັດ, ບໍ່ຖືຕົວ, ນິ້ມນວນ, ມີນິດໄສຄ່ຽມຄົມ, ເປັນແວ່ນແຍງອັນໃສແຈ້ງໃຫ້ປວງຊົນລາວທັງຊາດ, ການເຄື່ອນໄຫວວຽກງານ ຂອງເພິ່ນມີແຜນລະອຽດ, ເພິ່ນມັກການອອກແຮງງານ ບໍ່ວ່າຈະເປັນທາງດ້ານມັນສະໝອງ ກໍຄືຮ່າງກາຍ, ເພິ່ນວິສະວະກອນທີ່ເກັ່ງອັນດັບໜຶ່ງ ຂອງລາວ, ເປັນຜູ້ນໍາທີ່ເຄົາລົບຮັກ ແລະ ເຊື່ອຖື ຂອງປະຊາຊົນລາວບັນດາເຜົ່າ, ເພິ່ນບໍ່ພຽງແຕ່ເປັນຜູ້ນໍາທີ່ປະເສີດ ຂອງປະເທດຊາດ, ແຕ່ຍັງເປັນລູກທີ່ກະຕັນຍູ ຂອງພໍ່ແມ່ພີ່ນ້ອງ, ເປັນປູ່, ເປັນພໍ່ເຖົ້າ, ເປັນພໍ່ທີ່ແສນເຄົາລົບຮັກແລະ ແສນດີ ຂອງຄອບຄົວໃຫຍ່ສຸພານຸວົງ.

**III. ຮໍ່າຮຽນເອົາແບບຢ່າງຄຸນງາມຄວາມດີຂອງ ປະທານ ສຸພານຸວົງ.**

① ຮຽນເອົາຫັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ເຊື່ອໝັ້ນ ຕໍ່ການນໍາພາ ຂອງພັກ ກໍ່ຄືແນວທາງປ່ຽນແປງໃໝ່, ເອົາໃຈໃສ່ເຝິກຝົນຕົນເອງ ໃຫ້ກາຍເປັນພະນັກງານຮຸ່ນສືບທອດທີ່ຈົ່ງຮັກພັກດີ ຕໍ່ພັກ ແລະ ຕໍ່ປະເທດຊາດ.

② ອອກແຮງສຶກສາຮໍ່າຮຽນ ທິດສະດີມາກ - ເລນິນ, ເຕັກນິກວິທະຍາສາດ, ພາສາຕ່າງປະເທດ ແລະ ວິຊາຊີບໃນຂະແໜງການຕ່າງໆ ເພື່ອໃຫ້ຕົນເອງ ມີຄວາມຮູ້ຄວາມສາມາດສູງ, ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ, ພ້ອມກັນນັ້ນ ກໍ່ຕ້ອງສ້າງຕົນເອງໃຫ້ເປັນຄົນກ້າຫານ, ກ້າຄິດ, ກ້າສະແດງອອກ ເພື່ອປະກອບຄໍາຄິດ ຄໍາເຫັນ ທີ່ເປັນປະໂຫຍດ ໃນການຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍ, ນະໂຍບາຍຂອງພັກ ແລະ ກົດໝາຍ ຂອງລັດ.

③ ຕ້ອງດໍາລົງຊີວິດດ້ວຍຄວາມຊື່ສັດປອດໃສຂາວສະອາດ, ດຸໝັ່ນໃນການອອກແຮງງານ, ສ້າງເສດຖະກິດຄອບຄົວ, ປະຢັດມັດທະຍັດ ບໍ່ຫຼິ້ນກິນຟູມເຟືອຍ, ພ້ອມກັນຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃນສັງຄົມ, ສຸມໃສ່ການຜະລິດ ເພື່ອແກ້ໄຂຄວາມທຸກຍາກ ຂອງຄອບຄົວ ແລະ ເຮັດໃຫ້ຫຼຸດພົ້ນອອກຈາກປະເທດທີ່ດ້ອຍພັດທະນາ.

④ ຕ້ອງເດັດດ່ຽວໜຽວແໜ້ນປົກປັກຮັກສາປະເທດຊາດໄວ້ໃຫ້ໝັ້ນຄົງ, ຕໍ່ສູ້ທັບມ້າງກົນອຸບາຍຫັນປ່ຽນໂດຍສັນຕິ ຂອງພວກສັດຕູ, ພະຍາຍາມບຸກບືນກ້າວຂຶ້ນສ້າງສາພັດທະນາປະເທດຊາດໃຫ້ເຂັ້ມແຂງ, ສັງຄົມມີຄວາມສະເໝີພາບ ແລະ ມີຄວາມຈະເລີນຮຸ່ງເຮືອງສີວິໄລ.

⑤ ເພີ່ມທະວີຄວາມສາມັກຄີທົ່ວປວງຊົນ, ກ່ອນອື່ນໝົດແມ່ນຄວາມສາມັກຄີ ລະຫວ່າງ ເຜົ່າ, ຊັ້ນຄົນ ແລະ ສາສະໜາໃຫ້ແໜ້ນ, ເດັດດ່ຽວສະກັດກັ້ນ ແລະ ຕີຖອຍຖ້ອຍທໍານອງ ແລະ ການເຄື່ອນໄຫວແບ່ງແຍກຄວາມສາມັກຄີ ລະຫວ່າງ ເຜົ່າ, ລະຫວ່າງ ສາສະໜາ ຂອງພວກອິດທິກໍາລັງປໍລະປັກຢ່າງທັນການ. ຄະນະພັກອໍານາດການປົກຄອງທຸກຂັ້ນ ຕ້ອງເອົາໃຈໃສ່ ແລະ ລົງກໍ່ສ້າງຮາກຖານບ້ານເມືອງ ໃຫ້ໜັກແໜ້ນເຂັ້ມແຂງ ເພື່ອສ້າງບ້ານ ແລະ ກຸ່ມບ້ານພັດທະນາ.

໖ ຕັ້ງໜ້າຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຂອງພັກ ແລະ ແຜນພັດທະນາເສດຖະກິດ - ສັງຄົມ ຂອງລັດ ໃຫ້ປະກົດຜົນເປັນຈິງ.

**ຄຳຂວັນໂຄສະນາປຸກລະດົມ**

- ຮໍ່າຮຽນເອົາຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດຂອງ ປະທານ ສຸພານຸວົງ.
- ປະທານ ສຸພານຸວົງ ຜູ້ນຳທີ່ດີເດັ່ນ ແລະ ເຄົາລົບຮັກ ຂອງປະຊາຊົນລາວບັນດາເຜົ່າ ຍືນຍົງໃນດວງໃຈຂອງພວກເຮົາຕະຫຼອດການະນານ.

---------------------------------